ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ່ 0057 /ກປ.2006

ນະຄອນຫລວງວຽງຈັນ, ວັນທີ 23 JAN 2006

# ຄຳສັ່ງ

ຂອງລັດຖະມົນຕີ ວ່າການກະຊວງ ກະສິກຳ ແລະ ປ່າໄມ້

ວ່າດ້ວຍມາດຕະການປ້ອງກັນ ແລະ ສະກັດກັ້ນ ພະຍາດໄຂ້ຫວັດສັດປີກຢ່າງເຂັ້ມງວດ

ເຖິງ: ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ.

- ອີງໃສ່ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 85/ນຍ, ລົງວັນທີ 31/05/1 993 ວ່າດ້ວຍການ ຄຸ້ມຄອງສັດລ້ຽງ ໃນ ສປປ ລາວ.
- ອີງໃສ່ ຄຳສັ່ງແນະນຳ ຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 27/1/2004 ກ່ຽວກັບ ການຄວບຄຸມ ພະຍາດໄຂ້ຫວັດສັດປີກ.

ພາຍຫລັງທີ່ພະຍາດໄຂ້ຫວັດສັດປີກໄດ້ສະຫງົບລົງ ນັບແຕ່ ວັນທີ 4 ເດືອນ ມີນາ 2004 ເປັນຕົ້ນມາ ເຖິງປັດຈຸບັນນີ້ ບໍ່ທັນໄດ້ມີປະກົດການ ຂອງພະຍາດດັ່ງກ່າວສະແດງອອກຢູ່ໃນ ສປປ ລາວ, ແຕ່ເຖິງຢ່າງໃດກໍຕາມ, ຍັງມີບາງປະເທດຢູ່ໃນພາກພື້ນ ແລະ ໃນໂລກ ຍັງມີລາຍງານສືບຕໍ່ການລະບາດ ຂອງພະຍາດຢ່າງຕໍ່ເນື່ອງ ບໍ່ສະເພາະແຕ່ແຜ່ລະບາດຈາກສັດຫາສັດເທົ່ານັ້ນ ແຕ່ຍັງແຜ່ລະບາດຈາກສັດຫາຄົນອີກດ້ວຍ. ເພາະສະນັ້ນ, ພວກເຮົາຈຶ່ງມີຄວາມຈຳ ເປັນຕ້ອງມີມາດຕະການປ້ອງກັນ ແລະ ສະກັດກັ້ນ ເພື່ອບໍ່ໃຫ້ພະຍາດດັ່ງກ່າວ ສາມາດເກີດຂຶ້ນໄດ້ ແລະ ແຜ່ລາມໃນ ສປປ ລາວ ອີກຮອບໃໝ່.

ລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງດັ່ງນີ້:

1. ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫລວງ ແລະ ເຂດພິເສດ ຊີ້ນຳ ແລະ ມອບໝາຍ ໃຫ້ຂະແໜງລ້ຽງສັດ ແລະ ການປະມົງ ຮີບຮອ້ນປຸກລະດົມ ຊາວກະສິກອນຜູ້ລ້ຽງສັດປີກ ເຊັ່ນ: ໄກ່, ເປັດ, ນົກກະທາ ແລະ ອື່ນໆ ນັບທັງລ້ຽງແບບຄອບຄົວ, ກຸ່ມ ຫລື

ຟາມ ເອົາໃຈໃສ່ດູແລ ປົກປັກຮັກສາສຸຂະພາບ ແລະ ຄຸ້ມຄອງສັດລ້ຽງຂອງຕົນ, ຕິດຕາມ ເຝົ້າລະວັງ ຢ່າງເຄັ່ງຄັດ ໂດຍສະເພາະຢູ່ບັນດາແຂວງ ທີ່ເຄີຍເກີດພະຍາດດັ່ງກ່າວ ໃນຮອບໜຶ່ງຜ່ານມາແລ້ວ ເຊັ່ນ: ນະຄອນຫລວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ.

2. ຊຸກຍູ້, ແນະນຳ ຮູບແບບການລ້ຽງສັດປີກໃຫ້ແກ່ຊາວກະສິກອນ, ໂດຍໃຫ້ແຍກລ້ຽງສັດປີກແຕ່ລະປະເພດຕ່າງຫາກ, ບໍ່ໃຫ້ລ້ຽງປະປົນກັນ ເປັນຕົ້ນ: ເປັດ ແມ່ນໃຫ້ລ້ຽງສະເພາະເປັດ, ໄກ່ ກໍໃຫ້ລ້ຽງສະເພາະໄກ່ ເພື່ອປ້ອງກັນການຕິດແປດເຊື້ອພະຍາດ, ສະຖານທີ່ລ້ຽງສັດປີກກໍຕ້ອງໄດ້ກຳນົດຂອບເຂດ ແລ ະ ຂະໜາດ ຕາມຄວາມເໝາະສົມ ກັບຈຳນວນສັດປີກ ເພື່ອບໍ່ໃຫ້ມີຄວາມແອອັດເກີນໄປ, ມີຄອກ ຫລື ເຮືອນຮັງ ແລະ ມີຮົ້ວອ້ອມຮອບ ໂດຍໃຫ້ນຳໃຊ້ວັດຖຸ ທີ່ຫາໄດ້ງ່າຍ ຕາມເງື່ອນໄຂຂອງແຕ່ລະທ້ອງຖິ່ນ ເຊັ່ນ: ຝາກະແຕະສານດ້ວຍໄມ້ເຮັ້ຽ, ຕາໜ່າງຢາງ, ຕາໜ່າງເຫລັກ ຫລື ອື່ນໆ ເພື່ອປ້ອງກັນບໍ່ໃຫ້ສັດປີກ ອອກຫາກິນຊະຊາຍ ອາດເປັນສາເຫດໃຫ້ຕິດເຊື້ອພະຍາດໄດ້, ພ້ອມດຽວກັນນັ້ນ ກໍຕ້ອງໄດ້ທຳການອະນາໄມ ແລະ ຂ້າເຊື້ອພະຍາດພາຍໃນຄອກ ແລະ ບໍລິເວນອ້ອມຮອບ ຢ່າງໜ້ອຍ 1 ເດືອນຕໍ່ຄັ້ງ.

3. ສຳລັບເປັດພັນໄຂ່ທີ່ລ້ຽງປ່ອຍເຄື່ອນຍ້າຍຕາມທົ່ງ ຕ້ອງໄດ້ເອົາໃຈໃສ່ຕິດຕາມ ເຝົ້າລະວັງ ແລະ ມີການຄຸ້ມຄອງຢ່າງເຂັ້ມງວດ, ໃຫ້ຈັດຕັ້ງວິຊາການລ້ຽງສັດ ແລະ ການປະມົງແຂວງ ສົມທົບກັບເມືອງ ລົງເກັບກຳຂໍ້ມູນລະອຽດ ພ້ອມກັບຈັດຕັ້ງຂຶ້ນທະບຽນຟາມ, ໃຫ້ການແນະນຳ ແລະ ກຳນົດຂອບເຂດລ້ຽງເປັດດັ່ງກ່າວ ໃນຂະໜາດພື້ນທີ່ ທີ່ເໝາະສົມ, ຄອກ ຫລື ສະຖານທີ່ກັກຂັງເປັດຊົ່ວຄາວ (ຄອກໝູນວຽນ) ຕ້ອງໄດ້ທຳການອະນາໄມ ແລະ ຂ້າເຊື້ອພະຍາດທຸກຄັ້ງ ກ່ອນຈະເຄື່ອນຍ້າຍອອກໄປຕັ້ງຄອກໃໝ່. ໃນກໍລະນີ ທີ່ນຳໃຊ້ຄອກ ຫລື ສະຖານທີ່ກັກຂັງເປັດຊົ່ວຄາວນັ້ນເກີນກວ່າ 2 ອາທິດ ຕ້ອງໄດ້ທຳການອະນາໄມ ແລະ ຂ້າເຊື້ອພະຍາດ 1 ເດືອນຕໍ່ຄັ້ງ. ພ້ອມດຽວກັນນັ້ນ ກໍໃຫ້ຈັດຕັ້ງ ລົງເກັບສົ້ນສ່ວນຕົວຢ່າງ ຈາກເປັດພັນໄຂ່ ທີ່ລ້ຽງປ່ອຍ ເຄື່ອນຍ້າຍຕາມທົ່ງ ເພື່ອສົ່ງກວດຫາເຊື້ອພະຍາດເປັນປົກກະຕິ ທຸກໆ 45-60 ວັນ, ພ້ອມນັ້ນ ກໍໃຫ້ຕິດຕາມ ບ່ອນຈຳໜ່າຍ ຜະລິດຕະພັນ ທີ່ໄດ້ຮັບຈາກຝູງເປັດເຫລົ່ານັ້ນ ເຊັ່ນ ໄຂ່, ຊີ້ນ ແລະ ອື່ນໆ.

4. ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ແລະ ເຂດພິເສດ ສົມທົບກັບພາກສ່ວນກ່ຽວຂ້ອງ ຂັ້ນທ້ອງຖິ່ນ ຈັດຕັ້ງໂຄ ສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ປະຊາຊົນເຂົ້າໃຈ ແລະ ໃຫ້ຄວາມຮ່ວມມື ຕໍ່ກັບມາດຕະການປ້ອງກັນ ແລະ ສະກັດກັ້ນພະຍາດໄຂ້ຫວັດສັດປີກ ທີ່ທາງການວາງອອກ.